International Labour Organization

# ການປົກປ້ອງສັງຄົມຂັ້ນພື້ນຖານ

ການປົກປ້ອງສັງຄົມຂັ້ນພື້ນຖານ ໝາຍເຖິງການປົກປ້ອງປະຊາຊົນທຸກຖ້ວນໜ້າໃນຕະຫຼອດວົງຈອນຊີວິດຂອງເຂົາເຈົ້າ ໂດຍສະເພາະແມ່ນໃນຍາມຈຳເປັນ. ການປົກປ້ອງສັງຄົມຂັ້ນພື້ນຖານຈະຊ່ວຍໃນການຫຼຸດຜ່ອນຄວາມທຸກຍາກ, ຄວາມບອບບາງ ແລະ ການຖືກຈຳແນກອອກຈາກສັງຄົມ. ແຕ່ລະປະເທດຈະໃຫ້ນິຍາມການປົກປ້ອງສັງຄົມຂັ້ນພື້ນຖານແຕກຕ່າງກັນໄປ, ແຕ່ຢ່າງໜ້ອຍໃຫ້ປົກຄຸມ 4 ຫຼັກຄ້ຳປະກັນຂັ້ນພື້ນຖານດັ່ງລຸ່ມນີ້:



ການເຂົ້າເຖິງ**ຊຸດບໍລິການປິ່ນປົວສຸຂະພາບຂັ້ນພື້ນຖານ** ລວມທັງການເກີດລູກ ທີ່ໄດ້ມາດຕະຖານໃນດ້ານຄວາມພ້ອມໃນການສະໜອງບໍລິການ, ການເຂົ້າເຖິງ, ເປັນທີ່ຍອມຮັບໄດ້ ແລະ ມີຄຸນນະພາບພຽງພໍ.

**ຄ້ຳປະກັນລາຍໄດ້ຂັ້ນພື້ນຖານໃຫ້ແກ່ເດັກ** ຢ່າງໜ້ອຍໃຫ້ຢູ່ໃນລະດັບລາຍໄດ້ຂັ້ນຕ່ຳຂອງປະເທດ, ການເຂົ້າເຖິງແຫຼ່ງໂພຊະນະການ, ການສຶກສາ, ສຸຂະພາບ, ຜະລິດຕະພັນ ແລະ ການບໍລິການທີ່ຈຳເປັນອື່ນໆ.

ຄ້ຳປະກັນລາຍໄດ້ຂັ້ນພື້ນຖານໃຫ້ແກ່**ປະຊາກອນໃນໄວເຮັດວຽກ** ຜູ້ທີ່ບໍ່ສາມາດເຮັດວຽກໄດ້ ຍ້ອນການເຈັບປ່ວຍ, ການວ່າງງານ, ການເກີດລູກ ແລະ ພິການ, ຢ່າງໜ້ອຍໃຫ້ຢູ່ໃນລະດັບລາຍໄດ້ຂັ້ນຕ່ຳຂອງປະເທດ.

ຄ້ຳປະກັນລາຍໄດ້ຂັ້ນພື້ນຖານໃຫ້ແກ່**ຜູ້ສູງອາຍຸ**, ຢ່າງໜ້ອຍໃຫ້ເທົ່າກັບລະດັບລາຍໄດ້ຂັ້ນຕ່ຳຂອງປະເທດ.

---

ບັນດາປະເທດຄວນສ້າງຕັ້ງກອງທຶນປົກປ້ອງສັງຄົມທີ່ເປັນອົງປະກອບຂັ້ນພື້ນຖານໃຫ້ແກ່ລະບົບປົກປ້ອງສັງຄົມແຫ່ງຊາດ. ກອງທຶນນັ້ນຕ້ອງສະໜອງລະດັບການປົກປ້ອງສັງຄົມທີ່ສູງຂຶ້ນເລື້ອຍໆໃຫ້ກັບປະຊາຊົນທຸກຄົນ.

